Higher School Certificate (HSC) minimum standard parent meeting request

# ການຂໍໃຫ້ໄປຮ່ວມການປະຊຸມເລື້ອງ ມາດຕະຖານຕໍ່າສຸດຂອງ ໃບປະກາສນີຍາບັດຂັ້ນມັທຍົມສົມບູນ(HSC)

Name of student
ຊື່ຂອງນັກຮຽນ

Name of parent
ຊື່ຂອງພໍ່ແມ່

Date for meeting
ວັນທີຂອງການປະຊຸມ

ພໍ່ແມ່/ຜູ້ດູແລ ທີ່ຮັກແພງ

ຂ້າພະເຈົ້າຂຽນມາເຕືອນທ່ານເລື່ອງມາດຕະຖານຕໍ່າສຸດ ຂອງ(HSC). ສໍາ ລັບນັກຮຽນທີ່ຈະໄດ້ຮັບ ໃບປະກາດ HSC ພວກເຂົາຕ້ອງໄດ້ບັນລຸມາດຕະຖານຂັ້ນຕໍ່າສຸດ ດ້ານການຮູ້ ໜັງ ສືແລະຕົວເລກ. ມາດຕະຖານຕໍ່າສຸດໄດ້ຖືກກໍາ ນົດໂດຍການ ທົດສອບທາງອອນໄລນ໌ໃນການອ່ານ, ການຂຽນແລະ ການຄິດໄລ່ເລກ.

ໃນຂັ້ນຕອນນີ້ລູກຂອງທ່ານຍັງບໍ່ທັນໄດ້ບັນລຸມາດຕະຖານຕໍ່າ ສຸດຂອງ HSC ແລະເພາະສະນັ້ນຈຶ່ງມີຄວາມສ່ຽງທີ່ຈະບໍ່ໄດ້ຮັບໃບຢັ້ງຢືນ HSC.

ລູກຂອງທ່ານຍັງບໍ່ໄດ້ບັນລຸມາດຕະຖານ ໃນດ້ານ:

- ☐ Reading
  ການອ່ານ
- ☐ Numeracy
  ການຄິດໄລ່ເລກ
- ☐ Writing
  ການຂຽນ

ຂ້າພະເຈົ້າຕ້ອງການໃຫ້ທຸກໆໂອກາດແກ່ລູກທ່ານເພື່ອໃຫ້ບັນລຸມາດຕະຖານຂັ້ນຕໍ່າສຸດຂອງ HSC ແລະ ໃຫ້ທ່ານທຸກໂອກາດ ໃນການສນັບ ສນຸນອູ້ມຊູພວກເຂົາໃຫ້ປະສົບຄວາມສໍາເລັດ.

ຂ້າພະເຈົ້າຂໍເຊີນທ່ານໄປຮ່ວມປະຊຸມສົນ ທະນາຕາມວັນທີ ທີ່ແຈ້ງໄວ້ຢູ່ຂ້າງເທິງນີ້ ເພື່ອວ່າ ທ່ານ, ລູກຂອງທ່ານ ແລະ ທາງ ໂຮງຮຽນຈະສາມາດປຶກສາຫາລືກັນກ່ຽວ ກັບແຜນການຮຽນຮູ້ ຂອງລູກທ່ານຮ່ວມກັນ. ການສົນທະນາຈະ ປະກອບ ມີ ຄວາມຕັ້ງໃຈຂອງລູກທ່ານກ່ຽວກັບ HSC, ການສນັບສນຸນ ດ້ານການຮູ້ ໜັງສືແລະການຄິດໄລ່ເລກທີ່ມີຢູ່ ແລະ ທາງເລືອກ ຫຼັງຈາກການຈົບຈາກໂຮງຮຽນ. ການມີສ່ວນຮ່ວມຂອງທ່ານແມ່ນມີຄວາມສໍາຄັນຫຼາຍ.

ຜົນການສອບເສັງຂັ້ນມາດຕະຖານຕໍ່າສຸດຂອງ HSC ຂອງລູກທ່ານຈະມີໄວ້ໃຫ້ຢູ່ໃນບັນຊີ ນັກຮຽນ ອອນໄລນ໌ Student Online ຂອງລູກທ່ານທີ່ເວັບໄຊຕ໌ຂອງຫ້ອງການເບິ່ງແຍງ ມາດຕະຖານ ການສຶກສາ ຣັດ NSW (NESA). ພວກເຮົາຈະມີສໍາເນົາໄວ້ໃຫ້ທີ່ກອງປະຊຸມ.

ຖ້າທ່ານຕ້ອງການນາຍພາສາມາທີ່ກອງປະຊຸມ ກະຣຸນາຕິດຕໍ່ທາງໂຮງຮຽນຊຶ່ງຈະເປັນຜູ້ຈັດຫາໃຫ້ທ່ານຖ້າວ່າມີ.

## ບໍຣິການ ນາຍພາສາ ທາງໂທຣະສັບ

ຖ້າທ່ານຕ້ອງການນາຍພາສາເພື່ອຊ່ວຍທ່ານຕິດຕໍ່ຫາທາງໂຮງຮຽນ, ກະຣຸນາໂທຫາ ບໍຣິການນາຍພາສາ ທາງໂທຣະສັບຕາມ ໝາຍເລກ 13 14 50 ແລະຂໍເອົານາຍພາສາລາວ. ຜູ້ຮັບສາຍຈະໂທຫາໂຮງຮຽນ ແລະ ຊອກຫານາຍພາສາ ເພື່ອຊ່ວຍທ່ານໃນການໂອ້ລົມນັ້ນ. ທ່ານບໍ່ຕ້ອງເສັຍຄ່າບໍຣິການນີ້.

ດ້ວຍຄວາມຮັກແພງ

ທ່ານຄູໃຫຍ່ (Principal)

ຂໍ້ມູນເພີ້ມຕື່ມກ່ຽວກັບນະໂຍບາຍ ຂອງມາດຕະຖານຂັ້ນຕໍ່າສຸດຂອງ HSC ສາມາດຊອກຫາເອົາໄດ້ຕາມເວັບໄຊຕ໌ຂອງ (NESA)
https://educationstandards.nsw.edu.au/wps/portal/nesa/11-12/hsc/hsc-minimum-standard